# ທຄຕລ ສາຂາ ໄຊສົມບູນ ໄດ້ເປີດຕົວ ຢ່າງເປັນທາງການ
# ພ້ອມຍົກລະດັບການບໍລິການດ້ານການເງິນ ຢ່າງຮອບດ້ານລົງສູ່ທ້ອງຖິ່ນ




**ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)** ໄດ້ເປີດໃຫ້ບໍລິການ ສາຂາ ໄຊສົມບູນ ຢ່າງເປັນທາງການ. ພິທີດັ່ງກ່າວໄດ້ຈັດຂຶ້ນ **ໃນວັນພຸດ** ວັນທີ **26/11/2025** ທີ່ **ແຂວງໄຊສົມບູນ,** ໂດຍພາຍຫຼັງ ການເປີດສາຂາແຫ່ງໃໝ່ ເຮັດໃຫ້ປັດຈຸບັນ ທຄຕລ ມີທັງໝົດ **21 ສາຂາ** ພ້ອມໃຫ້ບໍລິການໃນທົ່ວປະເທດ.




ໃນພິທີເປີດຕົວສາຂາ ທຄຕລ ຄັ້ງນີ້ ໃຫ້ກຽດເຂົ້າຮ່ວມມີ **ທ່ານ ທອງວັນ ທຳມະວົງ (ຮອງເລຂາຄະນະພັກແຂວງ - ຫົວໜ້າຄະນະຈັດຕັ້ງ ແຂວງໄຊສົມບູນ), ທ່ານ ບົວຈັນ ແກ້ວມະນີ (ຮອງຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ - ທຫລ), ທ່ານ ສອນສະຫວັນ ສໍພາບມີໄຊ (ຮອງຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາ ພາກເໜືອ ແຂວງຊຽງຂວາງ)** ແລະ ຕາງໜ້າ ທຄຕລ ນຳໂດຍ **ທ່ານ ກົງສັກ ສຸພອນສີ (ຮອງຜູ້ອຳນວຍການ ທຄຕລ)** ພ້ອມດ້ວຍຄະນະທີ່ກ່ຽວຂ້ອງ, ມີຕາງໜ້າພະແນກການພາຍໃນແຂວງ, ບັນດານັກທຸລະກິດ, ແຂກຖືກເຊີນ ຕະຫຼອດເຖິງ ບັນດາລູກຄ້າຂອງທາງ ທຄຕລ ກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

**ການເປີດ ທຄຕລ ສາຂາ ໄຊສົມບູນ** ເປັນການຍົກລະດັບຈາກ ທຄຕລ ໜ່ວຍບໍລິການ ໄຊສົມບູນ ໃນເມື່ອກ່ອນ ເຊິ່ງ ທຄຕລ ໄດ້ມີຄວາມມຸ່ງໝັ້ນໃນການນຳເອົາການບໍລິການດ້ານການເງິນ ທີ່ມີຄຸນນະພາບ-ຄົບວົງຈອນລົງສູ່ທ້ອງຖິ່ນ ພ້ອມທັງຈະສືບຕໍ່ປະກອບສ່ວນອັນສຳຄັນໃນການພັດທະນາເສດຖະກິດ-ສັງຄົມຂອງ ແຂວງໄຊສົມບູນ ໂດຍຈະຍົກສູງການອຳນວຍຄວາມສະດວກດ້ານການບໍລິການ ໃຫ້ແກ່ ບັນດາຜູ້ປະກອບການ, ພະນັກງານລັດຖະກອນ ແລະ ປະຊາຊົນທ້ອງຖິ່ນ ໃຫ້ສາມາດເຂົ້າເຖິງ ແຫຼ່ງທຶນ, ການບໍລິການ ແລະ ຜະລິດຕະພັນດິຈິຕອນທີ່ຫຼາກຫຼາຍຂອງ ທຄຕລ ເຊັ່ນ: BCEL One, QR One Pay ແລະ ການບໍລິການຊຳລະສະສາງທັງພາຍໃນ ແລະ ຂ້າມແດນ ອີກດ້ວຍ.



**ຂ່າວໂດຍ:** ຂະແໜງ ພົວພັນນັກລົງທຶນ ແລະ ຮ່ວມມືສາກົນ https://www.bcel.com.la/ **Email:** bcelhqv@bcel.com.la